ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ນະຄອນຫຼວງວຽງຈັນ

ພະແນກອຸດສາຫະກຳ ແລະ ການຄ້າ

ເຈົ້າໜ້າທີ່ທະບຽນວິສາຫະກິດ

---1944

ເລກທີ........./ອຄ.ນວ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ..19.ຕຸລາ.2015..

ເຖິງ: - ບັນດາພາກສ່ວນຕ່າງໆ (ທັງພາລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ

- ບໍລິສັດ ໄຊຊະນະກໍ່ສ້າງ ຄົບວົງຈອນ ຈຳກັດຜູ້ດຽວ

ເລື່ອງ: ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ບໍລິສັດ ໄຊຊະນະ ກໍ່ສ້າງຄົບວົງຈອນ ຈຳກັດຜູ້ດຽວ

- ອີງຕາມ ມາດຕາ 19 ຂອງກົດໝາຍວ່າດ້ວຍວິສາຫະກິດ - ສະບັບປັບປຸງ 2013;
- ອີງຕາມ ແຈ້ງການໂຈະດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ ເລກທີ 1720/ອຄ.ຄພນ, ລົງວັນທີ 09 ກັນຍາ 2011;
- ອີງຕາມ ໜັງສືສະເໜີກວດກາຄວາມຖືກຕ້ອງ ບໍລິສັດ ໄຊຊະນະ ກໍ່ສ້າງຄົບວົງຈອນ ຈຳກັດຜູ້ດຽວ, ກົມກວດກາ - ກວດການ ປ.ກ.ສ, ກະຊວງ ປ້ອງກັນຄວາມສະຫງົບ ເລກທີ 073/ກກ.ປ ກ ສ, ລົງວັນທີ 07 ກັນຍາ 2015;
- ອີງຕາມ ບົດລາຍງານ ພະນັກງານເຮັດບັດປະຈຳຕົວບໍ່ຖືກຕ້ອງຕາມລະບຽບຫຼັກການວິຊາສະເພາະ ເລກທີ 658/ປນວ, ລົງວັນທີ 04 ສິງຫາ 2015;
- ອີງຕາມ ບົດລາຍງານ ພະແນກຄຸ້ມຄອງສາມະໂນຄົວ ແລະ ກໍ່ສ້າງຮາກຖານ ກວດກາປຶ້ມສຳມະໂນຄົວ ເລກທີ 1034/34 ໜ່ວຍ 47 ບ້ານ ທົ່ງປົ່ງ, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ ອອກຊື່: ທ່ານ ໄຊຊະນະ ແສງມະນີຈັນ
- ອີງຕາມ ແຈ້ງການ ສະບັບເລກທີ 254/ຈທວ.ທຄວ.ອຄ, ລົງວັນທີ 13 ຕຸລາ 2015

ເພື່ອສະກັດກັ້ນຜົນເສຍຫາຍທີ່ເກີດຈາກການເຄື່ອນໄຫວທຸລະກິດໂດຍບໍ່ຖືກຕ້ອງ ແລະ ສອດຄ່ອງຕາມ ລະບຽບກົດໝາຍ ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ແຈ້ງມາຍັງບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ບໍລິສັດ ໄຊຊະນະ ກໍ່ສ້າງຄົບວົງຈອນ ຈຳກັດຜູ້ດຽວ ທະບຽນວິສາຫະກິດ ເລກທີ 0213/ຈທວ, ລົງວັນທີ 01 ມີນາ 2013 ອອກໃຫ້ໂດຍ ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ໄດ້ຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ໃນປະເພດທຸລະກິດຕາມທີ່ໄດ້ບົ່ງໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ ດ້ວຍ

ເຫດຜົນ ຕາມບົດລາຍງານ ກ່ຽວກັບພະນັກງານເຮັດບັດປະຈຳຕົວບໍ່ຖືກຕ້ອງຕາມລະບຽບຫຼັກການວິຊາສະເພາະ ເລກທີ 658/ປນວ, ລົງວັນທີ 04 ສິງຫາ 2015 ແລະ ບົດລາຍງານ ພະແນກຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ກວດກາປຶ້ມສຳມະໂນຄົວ ເລກທີ 1034 /34 ໜ່ວຍ 47 ບ້ານ ທົ່ງປົ່ງ, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ ອອກຊື່: ທ່ານ ໄຊຊະນະ ແສງມະນີຈັນ (ໄດ້ຕິດຄັດມາພ້ອມນີ້);

2. ການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວນີ້ ມີຜົນນັບແຕ່ວັນທີ 13 ຕຸລາ 2015 ເປັນຕົ້ນໄປ ຈົນກວ່າຈະມີແຈ້ງການເປັນຢ່າງອື່ນ;

3. ຜົນຂອງການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວນີ້:

3.1 ວິສາຫະກິດບໍ່ສາມາດ ເຄື່ອນໄຫວທຸລະກິດ ແລະ ຕ້ອງນຳເອົາໃບທະບຽນວິສາຫະກິດ(ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເກັບຮັກສາໄວ້;

3.2 ໃບທະບຽນວິສາຫະກິດຂອງວິສາຫະກິດດັ່ງກ່າວບໍ່ສາມາດໃຊ້ໄດ້.

4. ໃນກໍລະນີລະເມີດແຈ້ງການສະບັບນີ້ ຜູ້ທີ່ລະເມີດຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ.

ແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເບີລິນ ເພັດຈັນທະຣາດ

ບ່ອນສົ່ງ:

| | |
|---|---|
| - ຫ້ອງວ່າການລັດຖະບານ | 01 ສະບັບ; |
| - ກະຊວງປ້ອງກັນຄວາມສະຫງົບ | 01 ສະບັບ; |
| - ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ | 01 ສະບັບ; |
| - ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ | 01 ສະບັບ; |
| - ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ | 01 ສະບັບ; |
| - ບໍລິສັດ ໄຊຊະນະ ກໍ່ສ້າງຄົບວົງຈອນ ຈຳກັດຜູ້ດຽວ | 01 ສະບັບ; |
| - ສຳເນົາ | 01 ສະບັບ. |